# ກ່ຽວແກ່ການສຳມະນາ ເພື່ອຟື້ນຟູວັນນະຄະດີ ວັດທະນະທຳ ແລະ ປະຫວັດສາດ ໃນໜັງສືໃບລານລາວ

3

**ພຣະອາຈານ ຊາລີ ກັນຕະສີໂລ**

## ຄວາມສຳຄັນ

ຫນັງສືໃລານລາວ ເປັນຄັງສົມບັດອັນລ້ຳຄ່າທີ່ເກົ່າແກ່ ແລະ ຍືນຍົງທີ່ສຸດ ທາງວັດທະນະທຳ ປະຫວັດ ສາດ ພາສາອັກສອນສາດ ແລະ ວັນນະຄະດີ ອັນເປັນແຫລ່ງທີ່ມາແຫ່ງພູມປັນຍາ ແລະ ວິຖີຊີວິດຂອງຄົນລາວ ມາແຕ່ບູຮານະກາລ.

## ສາເຫດຂອງຄວາມຕົກຕ່ຳ ເທົ່າທີ່ເປັນມາໃນລະຍະຫລັງໆ

ສາເຫດທີ່ສຳຄັນທີ່ສຸດ ຄືການທຳລາຍເອກະລາດຂອງລາວ ຢ່າງຕໍ່ເນື່ອງກັນມາ ເປັນເວລາ ປະມານ ສອງຮ້ອຍປີ ເມື່ອລາວສູນເສຍເອກະລາດອະທິປະໄຕແລ້ວ ກໍ່ຍ່ອມຫມາຍເຖິງ ການສູນເສຍທຸກຢ່າງ ທັງ ທາງການເມືອງ ເສດຖະກິດສັງຄົມ ວັດທະນະທຳ. ເປົ້າຫມາຍສຳຄັນໃນການທຳລາຍລາວ ໄດ້ເລີ່ມຈາກ ການທຳລາຍ ວັດທະນະທຳ ພາສາ ວັນນະຄະດີ ແລະ ພູມປັນຍາທີ່ເຮັດໃຫ້ເກີດຄວາມເຊື່ອຫມັ້ນ ເປັນ ປຶກແຜ່ນ ແລະສາມະຄີກັນໃນຊາດ ດັ່ງຈະເຫັນໄດ້ຈາກການຍຶດ ແລະຂົນເອົາຫນັງສືຜູກຈຳນວນຫລວງ ຫລາຍ ອອກໄປສູ່ຕ່າງປະເທດຫລາຍຄັ້ງຫລາຍຄາວ ຕະຫລອດຈົນການເຜົາທຳລາຍເອກະສານຕ່າງໆ ທີ່ຂົນເອົາໄປບໍ່ຫມົດນັ້ນອີກດ້ວຍ. ນອກຈາກນັ້ນ ຍັງພະຍາຍາມດູຖູກຢຽດຫຍາມ ພາສາ ແລະວັນນະຄະດີ ຂອງລາວ ວ່າເປັນຂອງຕ່ຳ ຫລ້າສະມັຍ ເຮັດໃຫ້ເກີດຄວາມເຂົ້າໃຈຜິດ ແລະ ດູຖູກຢຽດຫຍາມ ມໍລະດົກຂອງ ຊາດ ແມ່ນແຕ່ໃນຫມູ່ຄົນລາວເອງ ບາງສ່ວນກໍມີເຊັ່ນດຽວກັນ.

ຕະຫລອດເວລາເກືອບເຄິ່ງສັດຕະວັດທີ່ຜ່ານມາ ປະຊາຊົນລາວຕ້ອງດີ້ນຮົນຕໍ່ສູ້ເມື່ອຖືກປາບປາມ ຈາກພວກນັກລ່າເມືອງຂຶ້ນ ຈຶ່ງບໍ່ມີເວລາທີ່ຈະຫັນມາ ທະນຸບຳລຸງທາງດ້ານການສຶກສາວັດທະນະທຳ ໂດຍສະເພາະຢ່າງຍິ່ງ ອັກສອນສາດ ແລະວັນນະຄະດີຂອງຕົນເອງ ແລະແມ່ນແຕ່ຂອງເດີມທີ່ມີຢູ່ແລ້ວ ກໍຖືກນຳໄປເກັບເຊື່ອງໄວ້ ຂາດການດູແລ ຈຶ່ງເກີດການຊຳລຸດສູນຫາຍໄປ ເກືອບບໍ່ມີເຫລືອ.

ພາຍຫລັງການປົດປ່ອຍແລ້ວ ຊຶ່ງເປັນເວລາປະມານສາມສິບປີມານີ້ ລາວເຮົາຕ້ອງໃຊ້ເວລາສ່ວນໃຫຍ່ ໄປໃນການຟື້ນຟູຈິດໃຈປະຊາຊົນໃນຊາດ ຈັດລະບົບບ້ານເມືອງ ປັບປຸງຄຸນນະພາບຊີວິດການເປັນຢູ່ຂອງປະຊາຊົນ ໃນດ້ານກວ້າງເປັນສຳຄັນ ຈຶ່ງຍັງບໍ່ມີເວລາພໍທີ່ຈະຟື້ນ ວັດທະນະທຳໃນທາງເລິກ ຈຶ່ງເຮັດໃຫ້ຄົນລາວທີ່ເກີດມາໃນລະຍະເວລາດັ່ງກ່າວ ຂາດການຮັບຮູ້ທີ່ພໍພຽງ ແລະ ແລ້ວກໍເກີດຄວາມຮູ້ສຶກຫ່າງເຫີນຕໍ່ເລື່ອງ ມໍລະດົກທາງດ້ານສັງຄົມ - ວັດທະນະທຳອັນດີງາມ ທີ່ມີມາແຕ່ດັ້ງເດີມຂອງ ຕົນນັ້ນ.

## ແນວທາງປັບປຸງແກ້ໄຂໃນອະນາຄົດ

ບັນຫາຕ່າງໆດັ່ງກ່າວມາ ເປັນບັນຫາຂອງປະຫວັດສາດ ອັນລ່ວງເລີຍມາແລ້ວ ບໍ່ອາດເຮັດໃຫ້ກັບ ຄືນໄດ້ ແຕ່ເຮົາກໍຈະຕ້ອງສຶກສາ ແລະຈື່ຈຳ ແລ້ວທຳການເຜີຍແຜ່ເລື່ອງລາວ ຂອງຄວາມຍາກລຳບາກດັ່ງກ່າວນັ້ນ ໃນຫມູ່ຄົນຮຸ່ນໃຫມ່ ເພື່ອໃຫ້ຮູ້ສຳນຶກ ແລະຈົດຈຳຖ່າຍທອດກັນຕໍ່ໆໄປ ແລະຫາທາງປ້ອງ ກັນບໍ່ໃຫ້ເກີດສະພາບຄວາມເສື່ອມເສຍຕ່າງໆ ອັນອາດເກີດຊ້ຳອີກໃນອະນາຄົດ ສຳຫລັບບັນຫາການປັບປຸງແກ້ໄຂເລື່ອງນີ້ຕໍ່ໄປໃນອະນາະຄົດນັ້ນ ອາດມີທາງພິຈາລະນາໄດ້ດັ່ງນີ້ :

1. ຄວາມສຳຄັນຂອງບົດບາດໃນການນຳຂອງລັດ ບົດບາດສຳຄັນຂອງລັດໃນການແກ້ໄຂ ໃນເລື່ອງນີ້ ເປັນເລື່ອງຈຳເປັນທີ່ຂາດບໍ່ໄດ້ ໃນການດຳເນີນງານໃນເລື່ອງນີ້ ແລະກໍເປັນທີ່ໜ້າຍິນດີວ່າ ຕະຫລອດເວລາທີ່ຜ່ານມາ ຝ່າຍການນຳຂອງລັດ ໄດ້ທະວີຄວາມຈິງຈັງຫລາຍຂຶ້ນ ໂດຍສະເພາະການລິເລີ່ມໃຫ້ມີການສຳມະນາໃນຄັ້ງນີ້ ທີ່ດຳເນີນງານໂດຍພະນັກງານຂອງລັດ ແລະປັນຍາຊົນ ກ້າວໜ້າ ຮວມເຖິງຄວາມຮ່ວມມືຈາກມະຫາຊົນ ແລະເພື່ອນມິດຜູ້ຫວັງດີ ໃນຕ່າງປະເທດ ຍ່ອມຖືເປັນການພັດທະນາກ້າວສຳຄັນໃນການດຳເນີນງານໃນເລື່ອງນີ້ ຢ່າງຍິ່ງ.

2. ຄວນໃຫ້ມີການຈັດຕັ້ງຫນ່ວຍງານປະຈຳ ເພື່ອຮັບຜິດຊອບໃນການວາງແຜນດຳເນີນງານ ແລະປະສານງານ ເພື່ອທຳການສຶກສາຄົ້ນຄວ້າ ຮວບຮວມເຜີຍແຜ່ຜົນງານທີ່ກ້າວໜ້າໃນເລື່ອງນີ້ ໃຫ້ກວ້າງຂວາງ ແລະຕໍ່ເນື່ອງ ທັງພາຍໃນ ແລະນອກປະເທດ.

3. ໃຫ້ມີການສຶກສາຄົ້ນຄວ້າ ປະຣິວັດ ທັງໃນໜ່ວຍງານຂອງລັດ ແລະ ປະຊາຊົນຜູ້ສົນໃຈທົ່ວໄປ ຢ່າງກວ້າງຂວາງ ໂດຍໃຫ້ໜ່ວຍງານທີ່ຈັດຕັ້ງຂຶ້ນເພື່ອການນີ້ ທໍາການປະສານງານເພື່ອນໍາຜົນງານຈາກສ່ວນຕ່າງໆ ມາພິຈາລະນາ ແລະ ເຜີຍແຜ່ຕໍ່ໄປ ຕາມຄວາມເໝາະສົມ.

4. ສົ່ງເສີມໃຫ້ມີການສຶກສາເລື່ອງນີ້ ໃນສະຖານສຶກສາລະດັບຕ່າງໆ ຢ່າງຈິງຈັງ ແລະ ເໝາະສົມຍິ່ງຂຶ້ນ.

5. ສະແຫວງຫາການແລກປ່ຽນຄວາມຮູ້ ທັງພາຍໃນ ແລະ ທາງສາກົນໃຫ້ຫລາຍຂຶ້ນ ໂດຍການຈັດໃຫ້ມີວາລະສານ ຫລື ສິ່ງພິມຕ່າງໆ ທັງໃນພາສາລາວ ແລະ ພາສາຕ່າງປະເທດ ຕາມຄວາມສາມາດທີ່ມີຢູ່ ຕາມຄວາມຈໍາເປັນ ແລະ ເໝາະສົມເປັນຂັ້ນໆໄປ.

ເຫັນວ່າເລື່ອງນີ້ ອາດເວົ້າໄດ້ງ່າຍ ແຕ່ພາກປະຕິບັດແມ່ນຍາກ ແຕ່ອາດຕະມາກໍຫວັງວ່າ ດ້ວຍຄວາມພຽນພະຍາຍາມ ຄວາມອົດທົນ ຄວາມສາມັກຄີຂອງພວກເຮົາ ທຸກທ່ານທີ່ຮ່ວມ ຢູ່ໃນການສໍາມະນາໃນເລື່ອງນີ້ ກໍລ້ວນແຕ່ເປັນຜູ້ມີຄວາມຮູ້ ຄວາມສາມາດ ແລະ ຄວາມຕັ້ງໃຈມຸ່ງໝັ້ນຈິງຈັງຢູ່ແລ້ວ ຈະຊ່ວຍໃຫ້ອຸປະສັກຕ່າງໆ ໄດ້ຮັບການແກ້ໄຂໃຫ້ລຸລ່ວງໄປດ້ວຍດີ.

ຈາກຫົວຂໍ້ທີ່ກ່າວໄວ້ໃນບົດສະເໜີສັງເຂບແລ້ວນັ້ນ ອາຕະມາຈະຂໍອະທິບາຍເພີ່ມເຕີມອີກ ພຽງບາງສ່ວນ ສະເພາະຫົວຂໍ້ທີ່ນຶ່ງ ຄືເລື່ອງຄວາມສໍາຄັນຂອງໜັງສືໃບລານລາວ ຕາມຄວາມເຫັນທີ່ສະເໜີ ໄວ້ແລ້ວວ່າ ໜັງສືໃບລານລາວເປັນຄັງສົມບັດອັນລໍ້າຄ່າທີ່ເກົ່າແກ່ ແລະ ຍືນຍົງທີ່ສຸດທາງວັດທະນະທໍາ ປະຫວັດສາດ ພາສາອັກສອນສາດ ແລະ ວັນນະຄະດີ ອັນເປັນແຫລ່ງທີ່ມາຂອງ ພູມປັນຍາ ແລະວິຖີຊີວິດຂອງຄົນລາວມາແຕ່ບູຮານະການ.

ທີ່ວ່າເປັນຄັງສົມບັດ ໝາຍເຖິງເປັນແຫລ່ງທີ່ເກັບຮວບຮວມເອົາມໍລະດົກໃນດ້ານຕ່າງໆນັ້ນ ທັງໝົດຢ່າງອຸດົມສົມບູນຮອບດ້ານ ທີ່ວ່າເກົ່າແກ່ ແລະ ຍືນຍົງທີ່ສຸດນັ້ນ ກໍ່ໝາຍຄວາມວ່າ ເອກະສານທັງຫລາຍເຫລົ່ານັ້ນ ໄດ້ຮັບການຈານຈາລຶກໄວ້ເປັນເວລານານ ແລ້ວມີການບອກເລົ່າຈົດຈານຄັດກ່າຍຕໍ່ໆກັນມາບໍ່ຂາດສາຍ ໂດຍແຮງສັດທາຂອງປະຊາຊົນທຸກລະດັບໃນທົ່ວທັງສັງຄົມ ດັ່ງຈະເຫັນໄດ້ຈາກ ວັນນະຄະດີແຕ່ລະເລື່ອງ ມີຫລາຍໆສໍານວນ ແລະ ປະກົດຢູ່ຕາມວັດ ແລະ ບ້ານເຮືອນຂອງປະຊາຊົນ ທົ່ວໄປໃນດິນແດນລ້ານຊ້າງ ຊຶ່ງແມ່ນຈະຖືກຜູ້ບໍ່ປະສົງດີ ພະຍາຍາມທໍາລາຍລົງຄັ້ງແລ້ວຄັ້ງເລົ່າ ປະຊາຊົນລາວກໍໄດ້ພະຍະຍາມຮັກສາ ແລະ ຄັດກ່າຍສືບຕໍ່ໆກັນມາ ກັບທັງໄດ້ນໍາເອົາເນື້ອຄວາມອັນເປັນພູມວັດທະນະທໍາ

ພູມປັນຍາທີ່ຮວບຮວມໄວ້ໄດ້ຈາກເອກະສານເຫລົ່ານັ້ນ ມາບອກເລົ່າສັ່ງສອນແກ່ ລູກຫລານ ຈົນກາຍເປັນວິຖີຊີວິດຂອງຄົນລາວສືບຕໍ່ກັນມາ ເຮັດໃຫ້ຊີວິດທາງສັງຄົມວັດທະນະທຳ ຂອງຊາວລ້ານຊ້າງ ມີລັກສະນະອ່ອນນອກແຂງໃນ ທົນທານຕໍ່ການແຊກແຊງທຳລາຍຂອງສັດຕູມາໄດ້ໂດຍຕະຫລອດ ບໍ່ເຖິງກັບຫາຍສູນໄປໂດຍສິ້ນເຊີງ.

ແຕ່ຢ່າງໃດກໍຕາມ ເລື່ອງຄວາມຢູ່ລອດຂອງມໍລະດົກອັນລ້ຳຄ່າດັ່ງກ່າວນີ້ ກໍ່ຍັງຕ້ອງພະເຊີນກັບ ປັນຫາຕ່າງໆຢູ່ສະເໝີ ທັງຈາກພາຍນອກ ແລະ ຈາກພາຍໃນຂອງສັງຄົມຄົນເຮົາເອງ. ສຳຫລັບປັນຫາຈາກພາຍນອກ ໂດຍສະເພາະຢ່າງຍິ່ງ ປັນຫາຈາກການທຳລາຍລ້າງ ຂອງພວກນັກລ່າເມືອງ ຂຶ້ນ ທັງແບບເກົ່າແລະ ແບບໃໝ່ນັ້ນ ກໍເປັນທີ່ປະຈັກແຈ້ງຢູ່ແລ້ວ ຈຶ່ງຂໍຜ່ານໄປ ຫາກແຕ່ຈະຂໍກ່າວເຖິງ ສະເພາະບັນຫາທີ່ເກີດຈາກພາຍໃນສັງຄົມຂອງຄົນລາວຮຸ່ນຫລັງໆ ທີ່ເປັນຢູ່ໃນປັດຈຸບັນ ທີ່ຄົນບາງສ່ວນຂາດຄວາມໃສ່ໃຈເທົ່າທີ່ຄວນ ແລະ ເບິ່ງຂ້າມຄວາມສຳຄັນຂອງມໍລະດົກຊາດດັ່ງກ່າວນີ້ ລົງໄປເລື້ອຍໆ ແລະ ຄົນບາງສ່ວນກໍເຖິງກັບດູໝິ່ນວັດທະນະທຳຂອງຕົນເອງ ແບບຄົນບໍ່ຮູ້ຈັກຫົວນອນປາຍຕີນຂອງຕົນ ຫັນໄປຮຽນແບບວັດທະນະທຳຈອມປອມຈາກພາຍນອກ ເອົາມາເປັນວິຖີຊີວິດຂອງຕົນ ເຂົ້າທຳນອງ ທີ່ທ່ານກ່າວໄວ້ວ່າ **ສັງມາໄລເສຽຖິ້ມມູນມັງເຄົ້າເກົ່າ ສັງມາລະເຜົ່າເຊື້ອ ໄປຍໍຍ້ອງຜູ້ອື່ນດີ...** ຊຶ່ງນັບວ່າ ເປັນສັນຍານຂອງຄວາມເສື່ອມ ທີ່ໜ້າເປັນຫ່ວງບໍ່ໜ້ອຍເລີຍ.

ແຕ່ເຖິງຢ່າງໃດກໍຕາມ ເລື່ອງນີ້ກໍຍັງນັບວ່າບໍ່ຫລ້າບໍ່ສວາຍເກີນໄປ ເພາະຕາມກົດເກນແລ້ວ ມີ ຢູ່ວ່າ : ສະຖານະການອັນໃດ ເມື່ອມັນເສື່ອມລົງເຖິງຈຸດນຶ່ງແລ້ວ ມັນກໍຈະກັບຟື້ນຕົວຂຶ້ນມາໄດ້ອີກ ສະເໝີ ແລະ ກໍເປັນທີ່ໜ້າສັງເກດວ່າ ໃນລະຍະເວລາສິບປີມານີ້ແລ້ວ ຄວາມຕື່ນຕົວທາງດ້ານການສຶກສາຄົ້ນຄວ້າໃນເລື່ອງນີ້ຄ່ອຍໆມີຫລາຍຂຶ້ນຕາມລຳດັບ ກ່າວຄື ທາງດ້ານພາຍໃນ ໄດ້ມີຜູ້ໃສ່ໃຈສຶກສາຄົ້ນຄວ້າ ມໍລະດົກທາງວັດທະນະທຳລ້ານຊ້າງຫລາຍຂຶ້ນໂດຍສະເພາະຢ່າງຍິ່ງ ການຮວບຮວມເກັບຮັກສາ ແລະ ຂຶ້ນທະບຽນໜັງສືໃບລານຢ່າງເປັນລະບົບຊຶ່ງນຳໂດຍໜ່ວຍງານຂອງລັດຖະບານ ປະກອບກັບມີ ຜູ້ທຳການສຶກສາ ແລະ ປະລິວັດເນື້ອຫາຂອງວັນນະກຳບູຮານຕ່າງໆແລ້ວ ຈັດພິມເຜີຍແຜ່ຫລາຍຂຶ້ນ ມີການຮື້ຟື້ນການສຶກສາອັກສອນທຳໃນວົງການສຶກ ສາຂອງພະສົງຫລາຍຂຶ້ນ ຂະນະດຽວກັນ ກໍມີກະ ແສການຟື້ນຟູມໍລະດົກທາງວັດທະນະທຳຂອງໂລກພາຍໃຕ້ການນຳຂອງອົງການສຶກສາວິທະຍາສາດ ແລະ ວັດທະນະທຳ ຂອງອົງການສະຫະປະຊາຊາດ ແລະອົງການສຶກສາວັດທະນະທຳຕາເວັນອອກ ຂອງສະຖາບັນການສຶກ ສາໃນປະເທດຕ່າງໆ ຈຶ່ງປະກົດມີຜົນງານ

ສຶກສາ ວິໄຈ ແລະ ວິທະຍານິພົນ ກ່ຽວກັບປະຫວັດສາດ ວັດທະນະທຳ ອັກສອນສາດ ແລະ ວັນນະຄະດີລ້ານຊ້າງ ຕາມມະຫາວິທະຍາໄລ ຕ່າງໆ ແຜ່ຫລາຍຂຶ້ນ,

ປະກົດການດັ່ງກ່າວມານີ້ ຍ່ອມຖືໄດ້ວ່າ ເປັນສັນຍານທີ່ດີຕໍ່ການຟື້ນຟູມໍລະດົກອັນລ້ຳຄ່າຂອງລ້ານຊ້າງ ທີ່ເຄີຍຮຸ່ງເຮືອງມາແລ້ວ ໃຫ້ກັບຈະເລີນກ້າວໜ້າຕໍ່ໄປຢ່າງບໍ່ຢຸດຢັ້ງ ທ່າມການປ່ຽນແປງແຂ່ງຂັນໃນໂລກປັດຈຸບັນ ກ່າວສຳຫລັບເນື້ອຫາ ແລະ ປະໂຫຍດທີ່ສັງຄົມຂອງເຮົາຈະໄດ້ຮັບນັ້ນ ມີຢູ່ ມາກມາຍບໍ່ອາດນຳມາບັນຍາຍໄວ້ໃນທີ່ນີ້ໄດ້ທັງໝົດ.

ກ່າວໂດຍຫຍໍ້ແລ້ວເຮົາຈະເຫັນໄດ້ວ່າ ວັນນະກຳບູຮານຕ່າງໆຄື ຮາກແກ້ວ ແລະ ສາຍເລືອດ ໃຫຍ່ແຫ່ງວິຖີຊີວິດຂອງຊາວລ້ານຊ້າງ ທີ່ສືບທອດກັນມາຢ່າງບໍ່ຂາດສາຍ ເນື້ອຫາຂອງເລື່ອງລາວ ອັນເປັນ ພູມທັມພູມປັນຍາ ອັນເປັນເຄື່ອງຊີ້ນຳວິຖີຊີວິດຂອງຊາວລາວ ນອກຈາກປະກົດຢູ່ໃນໜັງສືຜູກສັ້ນຜູກຍາວຕ່າງໆແລ້ວ ຍັງມີການນຳມາແປງເປັນບົດຂັບລຳ ແລະ ທຳນອງເພງຕ່າງໆ ຮວມທັງ ບົດສຸພາສິດສອນໃຈທີ່ເອີ້ນວ່າ: ຜະຫຍາ ຫລື ປັດຊະຍາມວນຊົນ ທີ່ເຮົາພາກພູມໃຈສະເໝີມາ ດັ່ງຈະເຫັນໄດ້ຈາກການທີ່ຄົນບູຮານມັກກ່າວໄວ້ວ່າ " ເຂົ້າເຕັມພາ ບໍ່ທໍ່ຜະຫຍາເຕັມປູມ " ແລະ ມັກກ່າວເຖິງ ຄົນທີ່ມີຜະຫຍາປັນຫາດີວ່າ " ຊາຍເກັ່ງກ້າ ຜະຫຍາດີລູກພໍ່ " ດັ່ງນັ້ນ ຖ້າເຮົາໄດ້ທຳການສຶກສາວິເຄາະວັນນະກຳ ຢ່າງຖ່ອງແທ້ແລ້ວ ເຮົາຈະພົບວ່າ ມີຂອງດີເຊື່ອງຊ້ອນຢູ່ໃນວັນນະກຳເຫລົ່ານັ້ນມາກມາຍ ບໍ່ຮູ້ຈົບຮູ້ສ້ຽງ ເພາະແມ່ນແຕ່ໃນການປະຕິວັດຕໍ່ສູ້ກູ້ເອກະລາດຂອງເຮົາທີ່ຜ່ານມາແລ້ວນັ້ນ ການນຳຂອງການປະຕິວັດ ກໍໄດ້ນຳເອົາພູມປັນຍາອັນແຫລມຄົມ ຈາກວັນນະກຳບູຮານມາໃຊ້ຢ່າງໄດ້ຜົນ ດັ່ງທີ່ ທ່ານຜູ້ນຳສຳຄັນ ທ່ານໜຶ່ງ ເຄີຍຜາຣົບວ່າ "ການດຳເນີນງານປະຕິວັດຂອງເຮົານັ້ນ ໄດ້ນຳເອົາແບບຢ່າງ ຄວາມສະຫລຽວ ສະຫລາດ ໃນການຕໍ່ສູ້ຂອງທ້າວສິນໄຊ ມາໃຊ້ເປັນຢ່າງຫລາຍ ເຊິ່ງລັກສະນະ ເດັ່ນຂອງທ້າວສິນໄຊ ກໍຄື ເກັ່ງໃນການຕໍ່ສູ້ໃນສະໜາມຮົບ ແລະ ການຕໍ່ສູ້ເຫິງໂຕະເຈລະຈາການເມືອງ ໃນເວທີສາກົນ ແລະ ນຳໃຊ້ຍຸດທະສາດສຳຄັນທັງສອງ ແນວທາງນັ້ນ ສົມທົບເຂົ້າກັນຢ່າງໄດ້ຜົນ ດັ່ງທີ່ ປະກົດຢູ່ແລ້ວ".

ຄວາມສຳເລັດຂອງເຮົາໃນການຟື້ນຟູເລື່ອງນີ້ ໃນເບື້ອງຕົ້ນ ຍ່ອມຂຶ້ນຢູ່ກັບຄວາມສາມາດຂອງ ເຮົາໃນການເຮັດໃຫ້ປະຊາຊົນຫລຽວເຫັນຄວາມສຳຄັນຂອງມໍລະດົກທາງວັດທະນະທຳດັ່ງກ່າວນີ້ຢ່າງທົ່ວເຖິງ ກວ້າງຂວາງ ແລະ ເລິກເຊິ່ງ ໂດຍການນຳໃຊ້ເງື່ອນໄຂທັງພາຍໃນ ແລະ ພາຍນອກ ສົມທົບກັນຢ່າງເໝາະສົມ ແລະ ມີພະລັງ.

ຈາກທີ່ກ່າວມາໂດຍຫຍໍ້ນີ້ ຍ່ອມສລຸບໄດ້ວ່າ ມໍລະດົກຊາວລ້ານຊ້າງທີ່ໄດ້ຮັບການເກັບຮັກສາໄວ້ໃນໃບລານ ແລະສືບທອດກັນມາຢ່າງບໍ່ຂາດສາຍນັ້ນ ມີຄວາມສຳຄັນຕໍ່ຄວາມຢູ່ລອດ ແລະຄວາມຈະເລີນກ້າວໜ້າຢ່າງບໍ່ຢຸດຢັ້ງຂອງສັງຄົມເຮົາ ຂໍແຕ່ພຽງວ່າ ໃຫ້ເຮົາທຳການສຶກສາວິໄຈຢ່າງຖ່ອງແທ້ຈິງໃຈ ແລະ ນຳມາປະຍຸກໃຊ້ເຂົ້າກັບສະຖານະການຂອງໂລກປະຈຸບັນໃຫ້ຖືກຕ້ອງ ແລະ ເໝາະສົມເທົ່ານັ້ນ ຈຶ່ງຫວັງວ່າໃນການສຳມະນາຂອງເຮົາກ່ຽວແກ່ເລື່ອງນີ້ ຈະເປັນກ້າວສຳຄັນກ້າວໃຫຍ່ ທີ່ນຳໄປສູ່ຄວາມສຳເລັດດັ່ງກ່າວ.